**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສາທາລະນະສຸກ
ກົມອາຫານ ແລະ ຢາ
ໂທ: 021 214013-14
ແຟກ: 021 213495

98 06

ເລກທີ: 9806 /ກອຢ

ນະຄອນຫລວງວຽງຈັນ, ວັນທີ: 07 SEP 2022

# ໜັງສືແຈ້ງການ

**ຮຽນ:** ທ່ານ ຫົວໜ້າພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ທີ່ນັບຖືຢ່າງສູງ.
**ເລື່ອງ:** ການຂຶ້ນ ແລະ ຕໍ່ທະບຽນ ຜະລິດຕະພັນນໍ້າດື່ມໃນພາຊະນະບັນຈຸປິດ.

- ອີງຕາມ ກົດໝາຍ ວ່າດ້ວຍອາຫານ ສະບັບປັບປຸງ ເລກທີ 33/ສພຊ, ລົງວັນທີ 24 ກໍລະກົດ 2013;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍນໍ້າດື່ມໃນພາຊະນະບັນຈຸປິດ ສະບັບ ເລກທີ 585/ກຊສ, ລົງວັນທີ 12/05/2006;

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດ ການຂຶ້ນທະບຽນ ໂຮງງານຜະລິດນໍ້າດື່ມ ບັນລຸຕາມຕົວເລກຄາດໝາຍສູ້ຊົນໃຫ້ໄດ້ 85% ຮອດປີ 2025 ທີ່ໄດ້ກຳນົດໃນແຜນພັດທະນາວຽກງານອາຫານ ແລະ ຢາ 5ປີ (2021-2025) ປະຈຸບັນໂຮງງານນໍ້າດື່ມທົ່ວປະເທດມີຈຳນວນ 1293 ໂຮງງານ ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດ ມີພຽງແຕ່ 763 ໂຮງງານ ທີ່ຂຶ້ນທະບຽນແລ້ວ (ເທົ່າກັບ 59%). ເພື່ອຮັບປະກັນຄຸນນະພາບ ແລະ ຄວາມປອດໄພຂອງນໍ້າດື່ມໃຫ້ແກ່ຜູ້ບໍລິໂພກ ແລະ ຊຸກຍູ້ສົ່ງເສີມການຜະລິດນໍ້າດື່ມ ໃຫ້ມີຄວາມຖືກຕ້ອງຕາມລະບຽບກົດໝາຍວ່າດ້ວຍອາຫານ. ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ຈຶ່ງໄດ້ອອກແຈ້ງການມາຍັງທ່ານ ດັ່ງນີ້:

1. ໃຫ້ຂະແໜງອາຫານ ແລະ ຢາ ແຂວງ, ນະຄອນຫຼວງ ແລະ ເມືອງ ປະສານງານກັບຂະແໜງການທີ່ກ່ຽວຂ້ອງ ເພີ່ມທະວີການລົງຕິດຕາມ, ກວດກາ ຊຸກຍູ້ ໂຮງງານນໍ້າດື່ມ ທີ່ຍັງບໍ່ທັນໄດ້ຂຶ້ນ ຫຼື ຕໍ່ທະບຽນ ຕາມລະບຽບການທີ່ກຳນົດອອກ ເພື່ອປັບປຸງການບໍລິຫານຈັດການຄຸນນະພາບຂອງໂຮງງານ ຕາມຫຼັກການ ແລະ ຂຶ້ນທະບຽນຜະລິດຕະພັນນໍ້າດື່ມ;
2. ໃຫ້ປະຕິບັດມາດຕະການທີ່ເໝາະສົມສຳລັບໂຮງງານນໍ້າດື່ມທີ່ບໍ່ມາຂຶ້ນ ຫຼື ຕໍ່ທະບຽນ ບໍ່ປະຕິບັດຕາມລະບຽບກົດໝາຍກ່ຽວຂ້ອງ ແລະ ສົ່ງລາຍຊື່ໂຮງງານດັ່ງກ່າວໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ ເພື່ອສະເໜີມາດຕະການປິດໂຮງງານຕາມລະບຽບກົດໝາຍ;
3. ສຳລັບໂຮງງານນໍ້າດື່ມທີ່ບໍ່ສາມາດມາຕໍ່ທະບຽນ, ໃຫ້ແຈ້ງມາຍັງກົມອາຫານ ແລະ ຢາ ເປັນລາຍລັກອັກສອນໃນການຢຸດເຊົາໂດຍຜ່ານຂະແໜງອາຫານ ແລະ ຢາ, ພະແນກສາທາລະນະສຸກ ແຂວງ, ນະຄອນຫລວງ ເພື່ອເປັນຂໍ້ມູນ;
4. ໃຫ້ສືບຕໍ່ກວດກາໂຮງງານທີ່ໄດ້ຂຶ້ນ ຫຼື ຕໍ່ທະບຽນແລ້ວ ເພື່ອໃຫ້ສືບຕໍ່ຮັກສາຄວາມສະອາດໂຮງງານ, ຫ້ອງຜະລິດ, ເຄື່ອງຈັກອຸປະກອນ ທີ່ໃຊ້ໃນການຜະລິດນໍ້າດື່ມ ແລະ ຖັງເກັບນໍ້າ ໃຫ້ມີຄວາມສະອາດຢູ່ສະເໝີ ລວມທັງການປະຕິບັດສຸຂະອະນາໄມສ່ວນບຸກຄົນຂອງຜູ້ຜະລິດຢ່າງເຂັ້ມງວດ;

CamScanner

5. ໃຫ້ກວດກາການນຳໃຊ້ພາຊະນະບັນຈຸນ້ຳດື່ມ ເຊິ່ງໃຫ້ໂຮງງານໃຊ້ກະຕຸກ ສີຟ້າໃສ ຫຼື ກະຕຸກໃສ ທີ່ຜະລິດມາຈາກວັດຖຸດິບທີ່ເປັນ Food grade, ຫ້າມນຳໃຊ້ກະຕຸກນ້ຳດື່ມທີ່ມີຫຼາຍສີ ເຊັ່ນ: ກະຕຸກສີຂຽວ, ສີບົວ ແລະ ສີເຫຼືອງ;
6. ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຜະລິດ, ຈຳໜ່າຍ, ຂາຍນ້ຳດື່ມ ທີ່ຜ່ານເຄື່ອງຕອງຂະໜາດນ້ອຍແບບຮັບໃຊ້ໃນຄົວເຮືອນ;
7. ຫ້າມຜະລິດ, ຈຳໜ່າຍ ນ້ຳດື່ມທີ່ບໍ່ໄດ້ຂຶ້ນທະບຽນ, ນ້ຳດື່ມທີ່ບໍ່ບັນລຸມາດຕະຖານ ທາງດ້ານ ເຄມີ, ຈຸລິນຊີ ແລະ ຟີຊິກ ໂດຍເດັດຂາດ;
8. ສຳລັບການເກັບຕົວຢ່າງນ້ຳດື່ມ ເພື່ອສົ່ງມາວິໄຈແມ່ນປະຕິບັດໂດຍເຈົ້າໜ້າທີ່ຂະແໜງອາຫານ ແລະ ຢາ ສູນກາງ, ແຂວງ ແລະ ນະຄອນຫຼວງ, ເມືອງ ເທົ່ານັ້ນ;
9. ມອບໃຫ້ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ, ຂະແໜງອາຫານ ແລະ ຢາ, ກອງກວດກາອາຫານ ແລະ ຢາ, ແລະ ຂະແໜງການທີ່ກ່ຽວຂ້ອງ ພ້ອມກັນຈັດຕັ້ງປະຕິບັດຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ, ໃຫ້ຂະແໜງອາຫານ ແລະ ຢາ ເປັນເຈົ້າການ ສົມທົບກັບຂະແໜງການກ່ຽວຂ້ອງ ແລະ ອຳນາດການປົກຄອງແຕ່ລະຂັ້ນ ກ່າວເຕືອນ, ສຶກສາອົບຮົມ ປັບໃໝ ແລະ ປິດກິດຈະການ ຕາມແຕ່ກໍລະນີ ສຳລັບຜູ້ປະກອບການທີ່ລະເມີດ ແລະ ລາຍງານມາຍັງກົມອາຫານ ແລະ ຢາ ຕາມເວລາອັນຄວນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມລະບຽບການດ້ວຍ.

ດ້ວຍຄວາມນັບຖື

**ຫົວໜ້າກົມ**

**ປອ. ດຣ. ບຸນຊູ ແກ້ວຫາວົງ**

**ບ່ອນນຳສົ່ງ:**

- ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ 1 ສະບັບ
- ກອງກວດກາອາຫານ ແລະ ຢາ 1 ສະບັບ
- ສະມາຄົມນ້ຳດື່ມ 1 ສະບັບ
- ຂະແໜງການກ່ຽວຂ້ອງ 1 ສະບັບ

CamScanner